ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ : 560/ຫສນຍ. ກລຂ
ນະຄອນຫຼວງວຽງຈັນ, ວັນທີ : 20. 4. 2018

955
23-04-2018
ໂທລະສັບ: 2437

# ແຈ້ງການ

ຮຽນ : - ບັນດາທ່ານ ລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ.
- ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານເຈົ້າແຂວງ.

ເລື່ອງ : ທິດຊີ້ນຳກ່ຽວກັບການພິຈາລະນາຮັບຮອງເອົາການປັບຂຶ້ນຄ່າແຮງງານຂັ້ນຕ່ຳສຸດ ຂອງຜູ້ອອກແຮງງານ ຢູ່ ສປປ ລາວ.

- ອີງຕາມເອກະສານລາຍງານ ສະບັບເລກທີ 0665/ຮສສ, ລົງວັນທີ 13 ມີນາ 2018, ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ.
- ອີງຕາມທິດຊີ້ນຳ ແລະ ການຕົກລົງ ຂອງກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ຄັ້ງວັນທີ 20 ເມສາ 2018.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງທິດຊີ້ນຳ ແລະ ການຕົກລົງ ຂອງກອງປະຊຸມ ນາຍົກ-ຮອງນາຍົກລັດຖະມົນຕີ ມາຍັງທ່ານ ຊາບດັ່ງນີ້:

1) ເຫັນດີໃຫ້ປັບຄ່າແຮງງານຂັ້ນຕ່ຳສຸດ ຂອງຜູ້ອອກແຮງງານ ຢູ່ ສປປ ລາວ ຂຶ້ນຈາກ 900.000 ກີບ (ເກົ້າແສນກີບ) ເປັນ 1.100.000 ກີບ (ໜຶ່ງລ້ານໜຶ່ງແສນກີບ) ຕໍ່ຄົນ ຕໍ່ເດືອນ ແລະ ເລີ່ມຈັດຕັ້ງປະຕິບັດ ແຕ່ວັນທີ 01 ພຶດສະພາ 2018 ເປັນຕົ້ນໄປ.

2) ມອບໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຕິດຕາມ, ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ ແລະ ມີປະສິດທິຜົນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,
ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເພັດ ພົມພິພັກ

ບ່ອນນຳສົ່ງ:

| | |
|---|---|
| - ນາຍົກ-ຮອງນາຍົກລັດຖະມົນຕີ | 04 ສະບັບ |
| - ຫ້ອງວ່າການສູນກາງພັກ | 01 ສະບັບ |
| - ອົງການຈັດຕັ້ງພັກ ພາກສ່ວນລະ | 01 ສະບັບ |
| - ສູນກາງແນວລາວສ້າງຊາດ | 01 ສະບັບ |
| - ອົງການນິຕິບັນຍັດ, ອົງການຕຸລາການ | 01 ສະບັບ |
| - ອົງການຈັດຕັ້ງມະຫາຊົນ ພາກສ່ວນລະ | 01 ສະບັບ |
| - ຄະນະເລຂາທິການສະພາແຫ່ງຊາດ | 01 ສະບັບ |
| - ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ | 01 ສະບັບ |
| - ສຳເນົາ | 06 ສະບັບ |